ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະຮັບຜິດຊອບ
ການປະມູນຂາຍໄມ້ທີ່ຍຶດເປັນຂອງລັດ
ໃນຂອບເຂດທົ່ວປະເທດ

ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2018

ເຖິງ: - ທ່ານ ຫົວໜ້າຄະນະຮັບຜິດຊອບປະມູນຂາຍໄມ້ຍຶດຂັ້ນແຂວງ, ນະຄອນຫຼວງ
- ທ່ານ ຫົວໜ້າພະແນກ ອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ

ເລື່ອງ: ເພີ່ມທະວີເອົາໃຈໃສ່ປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ແລະ ຊຸກຍູ້ຈັດເກັບລາຍຮັບຈາກການຂາຍໄມ້ໃຫ້ສໍາເລັດໂດຍໄວ.

- ອີງຕາມ ບົດສະຫຼຸບຕີລາຄາສະພາບພົ້ນເດັ່ນໃນການເຄື່ອນໄຫວວຽກງານ 8 ເດືອນຕົ້ນປີ ແລະ ແຜນວຽກຈຸດສຸມທ້າຍປີ 2018 ຂອງລັດຖະບານ ເລກທີ 07/ຫສນຍ.ກຄສ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເລກທີ 1859/ຫສນຍ.ກລຂ, ລົງວັນທີ 6 ພະຈິກ 2018 ໃຫ້ເອົາໃຈໃສ່ເພີ່ມທະວີການປະມູນຂາຍໄມ້ຍຶດຂອງລັດ ແລະ ໄມ້ທີ່ຍັງຄ້າງໃຫ້ໄວ.

ເພື່ອໃຫ້ການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ໃນຂອບເຂດທົ່ວປະເທດສາມາດສໍາເລັດໄດ້ຕາມເປົ້າໝາຍ, ແນໃສ່ຮັບປະກັນຄວາມໂປ່ງໃສ, ເປັນທໍາ, ຖືກຕ້ອງຕາມລະບຽບການ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ຮັບປະກັນຜົນປະໂຫຍດຮ່ວມກັນລະຫວ່າງພາກລັດ ແລະ ພາກທຸລະກິດ. ຄະນະຮັບຜິດຊອບການປະມູນຂາຍໄມ້ທີ່ຍຶດຂອງລັດໃນຂອບເຂດທົ່ວປະເທດ ແຈ້ງມາຍັງ ທ່ານ ເພື່ອປະຕິບັດດັ່ງລຸ່ມນີ້:

1. ໃຫ້ ຄະນະຮັບຜິດຊອບປະມູນຂາຍໄມ້ທີ່ຍຶດເປັນຂອງລັດຂັ້ນແຂວງ, ນະຄອນຫຼວງ ເພີ່ມທະວີປະມູນຂາຍໄມ້ທີ່ຍຶດເປັນຂອງລັດ (ໄມ້ຍຶດເກົ່າ ແລະ ໄມ້ຍຶດໃໝ່) ແລະ ບ້ວງອື່ນໆທີ່ຍັງຄ້າງໃຫ້ສໍາເລັດໂດຍໄວ ຕາມຂັ້ນຕອນ ແລະ ກໍານົດເວລາ ທີ່ກໍານົດໄວ້ ຕາມຄໍາສັ່ງແນະນໍາການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ສະບັບເລກທີ 0336/ອຄ.ກຂອ, ລົງວັນທີ 13 ມີນາ 2017. ແນ່ໃສ່ການເກັບລາຍຮັບຈາກການຂາຍໄມ້ເຂົ້າງົບປະມານລັດ ແລະ ເພື່ອບໍ່ໃຫ້ໄມ້ຍຶດທີ່ຍັງຄ້າງ ໂດກເນົ່າ ແລະ ເຊື່ອມຄຸນນະພາບລົງໄປກວ່ານີ້;

2. ໃຫ້ ຄະນະຮັບຜິດຊອບປະມູນຂາຍໄມ້ທີ່ຍຶດເປັນຂອງລັດຂັ້ນແຂວງ, ນະຄອນຫຼວງ ກວດຄືນການປະຕິບັດສັນຍາຊື້-ຂາຍໄມ້ ແລະ ເລັ່ງທວງໃຫ້ຜູ້ຊະນະການປະມູນທີ່ຍັງບໍ່ທັນເຂົ້າມາຖອກຊໍາລະຄ່າພັນທະໄມ້ເທື່ອ ໃຫ້ຮີບຮ້ອນເຂົ້າມາຖອກຊໍາລະໃຫ້ຖືກຕ້ອງຕາມສັນຍາ. ຖ້າໂຮງງານ/ບໍລິສັດໃດ ຫາກບໍ່ປະຕິບັດຕາມສັນຍາ ຫຼື ມີການແກ່ຍາວໄລຍະເວລາດົນນານແມ່ນໃຫ້ຄົ້ນຄວ້າລາຍງານຄະນະນໍາຂອງແຂວງ ເພື່ອອອກຂໍ້ຕົກລົງລົບລ້າງ ແລະ ພິຈາລະນາຫາທາງຂາຍໃຫ້ແກ່ໂຮງງານ/ບໍລິສັດອື່ນ ທີ່ສະເໜີໃຫ້ລາຄາຕາມທີ່ໄດ້ຕົກລົງຂາຍຜ່ານມາ ຫຼື ລາຄາສູງສຸດ.

3. ສໍາລັບໄມ້ຍຶດທີ່ໄດ້ເຮັດສັນຍາຊື້-ຂາຍແລ້ວ, ແຕ່ບໍລິມາດໄມ້ຕົວຈິງບໍ່ຖືກຕ້ອງຕາມບັນຊີມັ້ນ (ໄມ້ບໍ່ຄົບ). ໃຫ້ຄະນະຮັບຜິດຊອບປະມູນຂາຍໄມ້ທີ່ຍຶດເປັນຂອງລັດ ພິຈາລະນາຕາມແຕ່ລະກໍລະນີ ຄື:

➢ ສັນຍາທີ່ໄດ້ຖອກຊໍາລະເງິນເຂົ້າລັດຄົບຖ້ວນແລ້ວ: ໃຫ້ຄົ້ນຄວ້າບ້ວງໄມ້ຍຶດທີ່ຍັງບໍ່ທັນໄດ້ປະມູນເທື່ອ ຫຼື ປະມູນແລ້ວ ແຕ່ບໍ່ມີຜູ້ສົນໃຈຊື້ ເພື່ອແທນຄືນໃຫ້ແກ່ໂຮງງານ/ບໍລິສັດ ທີ່ຊະນະການປະມູນໃຫ້ຄົບຕາມຈໍານວນໂດຍໄລ່ລຽງຕາມລາຄາ ແລະ ຄຸນນະພາບໄມ້ຕົວຈິງ.

4. ໃຫ້ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ແກ່ກະຊວງອຸດສາຫະກຳ ແລະ ການຄ້າ (ກອງເລຂາຄະນະຮັບຜິດຊອບປະມູນຂາຍໄມ້ຍຶດ) ຊາບ;
5. ໃຫ້ສືບຕໍ່ເພີ່ມທະວີເອົາໃຈໃສ່ໃນການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ປະຕິບັດຕາມນີ້ດ້ວຍ.

ຮອງລັດຖະມົນຕີ, ກະຊວງອຸດສາຫະກຳ ແລະ ການຄ້າ
ຫົວໜ້າຄະນະຮັບຜິດຊອບປະມູນຂາຍໄມ້ທີ່ຍຶດເປັນຂອງລັດ

ບຸນມີ ນະນີວົງ

ບ່ອນສົ່ງ:

| | | |
|---|---|---|
| - | ຄະນະຮັບຜິດຊອບປະມູນຂາຍໄມ້ຍຶດ ຂັ້ນແຂວງ, ນະຄອນຫຼວງວຽງຈັນ | ເພື່ອປະຕິບັດ |
| - | ຄະນະສະເພາະກິດ40/ນຍ | ເພື່ອຊາບ |
| - | ຄະນະສະເພາະກິດ 415/ຫລນຍ | ເພື່ອຊາບ |
| - | ກົມຕິດຕາມວຽກງານລວມ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | ເພື່ອຊາບ |
| - | ກົມປ່າໄມ້, ກະຊວງ ກະສິກຳ ແລະ ປ່າໄມ້ | ເພື່ອຊາບ |
| - | ກົມຄຸ້ມຄອງຊັບສິນຂອງລັດ, ກະຊວງການເງິນ | ເພື່ອຊາບ |